**ມິຊຊາອາທິດໃບລານ**

**ວັນທີ 28 ມີນາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 11, 1-10**

ເມື່ອພຣະເຢຊູເຈົ້າກັບພວກລູກສິດສະເດັດມາໃກ້ນະຄອນເຢຣູຊາແລມແລະມາເຖິງບ້ານເບທານີທີ່ຢູ່ຕີນພູໝາກກອກ, ພຣະອົງຊົງໃຊ້ລູກສິດສອງຄົນໄປພ້ອມທັງສັ່ງວ່າ: “ຈົ່ງໄປບ້ານທີ່ຢູ່ຕໍ່ໜ້າພຸ້ນ, ເມື່ອໄປຮອດແລ້ວ, ພວກເຈົ້າຈະເຫັນລູກລາລ່າມຢູ່. ລາຕົວນີ້ບໍ່ທັນມີໃຜເຄີຍຂີ່. ຈົ່ງແກ້ເອົາແລະຈູງມາໃຫ້ເຮົາ. ຖ້າມີໃຜຖາມວ່າ: ເຮັດຫຍັງນັ້ນ? ກໍໃຫ້ຕອບເຂົາວ່າ: ພຣະອົງເຈົ້າຕ້ອງການແລະຈະເອົາຄືນມາສົ່ງໃຫ້ໃນໄວໆນີ້. ພວກລູກສິດທັງສອງກໍພາກັນໄປ ແລະເຫັນລູກລາລ່າມຢູ່ໜ້າປະຕູນອກທາງ, ຈຶ່ງເຂົ້າໄປແກ້ເອົາ. ໃນພວກທີ່ຢູ່ທີ່ນັ້ນ, ມີລາງຄົນຮ້ອງຖາມວ່າ: “ແກ້ເອົາລາໄປເຮັດຫຍັງ?” ພວກລູກສິດກໍຕອບຕາມທີ່ພຣະເຢຊູເຈົ້າໄດ້ສັ່ງ. ເຂົາເລີຍປະໃຫ້ແກ້ເອົາໄປ. ແລ້ວລູກສິດທັງສອງກໍຈູງລູກລາມາຫາພຣະເຢຊູເຈົ້າ. ພວກເຂົາແກ້ເສື້ອຕຸ້ມຂອງຕົນມາປູເທິງຫລັງມັນ, ແລ້ວເຊີນພຣະເຢຊູເຈົ້າສະເດັດປະທັບນັ່ງ. ຫລາຍໆຄົນແກ້ເສື້ອຕຸ້ມຂອງຕົນມາປູລົງຕາມທາງສະເດັດ. ລາງຄົນກໍເອົາກິ່ງໄມ້ທີ່ຕັດມາແຕ່ທົ່ງປູຍາຍຕາມທາງ. ຝູງຄົນທີ່ແຫ່ຢູ່ທາງໜ້າແລະທາງຫລັງພ້ອມກັນໂຮຮ້ອງວ່າ: “ໂຮຊັນນາ! ຂໍຖະຫວາຍພອນແດ່ທ່ານຜູ້ສະເດັດມາ, ເດຊະພຣະນາມຂອງພຣະອົງເຈົ້າ. ຂໍຖະຫວາຍພອນໃຫ້ລາດຊະອານາຈັກຂອງພະຍາດາວິດ, ບັນພະບຸຣຸດຂອງພວກເຮົາທີ່ກໍາລັງຈະມາເຖິງ. ໂຮຊັນນາຢູ່ສະຫວັນສູງສຸດ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້, ພວກເຮົາພ້ອມກັບພຣະເຢຊູເຈົ້າສະເດັດເຂົ້າໃນນະຄອນເຢລູຊາແລມ, ບ່ອນຊຶ່ງພຣະອົງຈະຕ້ອງຮັບທໍລະມານແລະຕາຍ. ພຣະເຢຊູເຈົ້າສະເດັດເຂົ້າໃນນະຄອນເຢລູຊາແລມເໝືອນດັ່ງກະສັດ, ແຕ່ແມ່ນກະສັດທີ່ນັ່ງຢູ່ບົນຫລັງລາ. ໝາຍວ່າແມ່ນກະສັດທີ່ສຸພາບອ່ອນນ້ອມ, ກະສັດທີ່ບໍ່ໄດ້ມາເພື່ອໃຫ້ຄົນອື່ນຮັບໃຊ້, ແຕ່ເພື່ອຮັບໃຊ້ຄົນອື່ນແລະເພື່ອມອບຊີວິດຂອງຕົນເພື່ອພວກເຂົາ. ມີສິ່ງໜຶ່ງອີກທີ່ໜ້າສັງເກດໃນຂະບວນແຫ່ເຂົ້ານະຄອນເຢລູຊາແລມນັ້ນແມ່ນຝູງຊົນ. ຝູງຊົນໄດ້ໂຮຮ້ອງສັນລະເສີນພຣະເຢຊູເຈົ້າໂດຍກ່າວວ່າ: “ໂຮຊັນນາ, ບຸດພະຍາດາວິດ! ຂໍຖະຫວາຍພອນໃຫ້ທ່ານຜູ້ສະເດັດມາໃນນາມຂອງພຣະເຈົ້າ”. ພວກເຂົາສັນລະເສີນພຣະເຢຊູເຈົ້າ ຍ້ອນພວກເຂົາໄດ້ເຫັນອັດສະຈັນທີ່ພຣະອົງຊົງກະທໍາ. ພວກເຂົາໂຮຮ້ອງສັນລະເສີນພຣະເຢຊູເຈົ້າ ຍ້ອນພວກເຂົາຢາກໃຫ້ພຣະອົງມາເປັນກະສັດຂອງພວກເຂົາ. ແຕ່ອານາຈັກຂອງພຣະເຢຊູເຈົ້າບໍ່ໄດ້ຢູ່ໃນໂລກນີ້. ຝູງຊົນທີ່ໂຮຮ້ອງສັນລະເສີນພຣະເຢຊູເຈົ້າດຽວນີ້, ອີກບໍ່ນານກໍຈະແມ່ນພວກເຂົາເອງທີ່ຮ້ອງສຽງດັງວ່າ: ເອົາມັນໄປຂ້າ, ເອົາມັນໄປຄຶງກາງເຂນ. ແນ່ນອນ, ຜູ້ໜຶ່ງໃນຝູງຊົນນີ້ອາດຈະແມ່ນພວກເຮົາຜູ້ຕິດຕາມພຣະເຢຊູເຈົ້າ, ຜູ້ເປັນສິດຂອງພຣະອົງ. ເຖິງປານນັ້ນກໍດີ, ພຣະເຢຊູເຈົ້າກໍກ່າວບົນກາງເຂນກ່ອນທີ່ພຣະອົງຈະສິ້ນໃຈວ່າ: “ໂອພຣະບິດາເຈົ້າ, ໂຜດຍົກໂທດໂຜດຜິດໃຫ້ພວກເຂົາ. ຍ້ອນພວກເຂົາບໍ່ຮູ້ຈັກສິ່ງທີ່ພວກເຂົາກະທໍາ”. ສິ່ງນີ້ສະທ້ອນໃຫ້ເຫັນເຖິງຄວາມຮັກເມດຕາທີ່ພຣະເຢຊູເຈົ້າມີຕໍ່ພວກເຮົາຜູ້ເປັນຄົນບາບ, ຄົນທໍລະຍົດຕໍ່ພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໃນວັນອາທິດໃບລານນີ້, ແທນທີ່ລູກຈະພ້ອມກັບຝູງຊົນໂຮຮ້ອງສັນລະເສີນພຣະອົງເຂົ້າໄປນະຄອນເຢລູຊາແລມ, ຂໍໃຫ້ລູກຮູ້ຈັກຮ້ອງໄຫ້ເຖິງບາບຜິດທີ່ລູກໄດ້ກະທໍາຕໍ່ພຣະອົງ. ເພື່ອລູກຈະໄດ້ມີຄວາມເດັດດ່ຽວໃນການຄຽດຊັງບາບ, ພະຍາຍາມບໍ່ກະທໍາຜິດຕໍ່ພຣະອົງອີກແລະກັບມາຄືນດີກັບພຣະອົງຢ່າງຈິງໃຈດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ